# ມາລີພອນ ຊອນຊ່ານ



ສຳນວນ ເພັດດາວເຮືອງ 2007

# ມາລີພອນ ຊອນຮ່ານ

## ຄຳອອນ ເພັດດາວເຮືອງ 2007

[illegible]
[illegible]
[illegible]
[illegible]
[illegible]
18/3/09.

# *ຄຳນຳ*



*ເພື່ອໃຫ້ການຍືນຍົງຄົງຕົວຂອງ ກະວີຄົນຮຸ່ນສືບທອດ ມີໄວ້ປະດັບສັງຄົມລາວເຮົາບໍ່ວ່າໃນຍຸກສະໄໝໃດແປວໄຟທີ່ຮຸ່ງເຮືອງເຫລືອງເຫລື້ອມແຫ່ງກະວີເອກກໍ່ຍັງພຸ່ງແສງປະກາຍ ຢາຍໄປທຸກສາຂາງ່າໄມ້ໄພພະນອມຫ້ວຍຮ່ອມພູເຂົາໃນທົ່ວຜືນແຜ່ນດິນສຸວັນນະພູມ ແຫ່ງນີ້ຕະຫລອດການະນານ.*

*ຖ້າຢ້ອນຍຸກໄປເຖິງສະໄໝລາວລ້ານຊ້າງ ເພິ່ນກໍ່ຍັງປະໄວ້ເປັນທີ່ເອກອ້າງໃຫ້ແກ່ຊາວໂລກຕົກຕະລຶງຍົກຍ້ອງ ແລະ ຊົມເຊີຍ " ມະຫາກາບ " ອັນໄຮ້ທຽມທານແຫ່ງສີມືວາດຂຽນຂອງຄົນລາວ.*

*ໃນທ່າມກາງສະແສສິລ ແມ່ນວ່າຈະຢູ່ປາຍແຖວແລວທາງ ຂອງກະວີຫລາຍຮຸ່ນຄົນ ມາລີພວນ (ນາມຈິງ ຄຳອອນ ເພັດດາວເຮືອງ) ກໍ່ແມ່ນກະວີເພດຍິງ ຜູ້ທີ່ຂ້າພະເຈົ້າຮູ້ຈັກຮັກໄຄ່ມາແຕ່ຍັງເຍົາໄວ ແລະ ພູມໃຈຢາກສະເໜີແນະຜົນງານການຂີດຂຽນ ແລະ ສິ່ງກ່ຽວຂ້ອງກັບຕົວຜູ້ກ່ຽວ ຕາງແນະນຳຕົວຝາກໄວ້ເປັນເພື່ອນແກ້ເຫງົາ ແລະ ກ່ອມອາລົມຈິດດ້ວຍບົດກະວີ ໃນເວລາທີ່ຫົວໃຈທ່ານຕ້ອງການຄວາມອ່ອນຊ້ອຍໃນແຕ່ລະບົດກອນດັ່ງກ່າວ.*

*ເນື້ອໃນຂອງແຕ່ລະບົດນັ້ນ ລ້ວນແລ້ວແຕ່ສ່ອງແສງເຖິງວິຖີຊີວິດອັນດີງາມລຽບງ່າຍ ແລະ ຂຸນແຮງເປື່ອຍທາງດ້ານຕັ້ງໜ້າ ແລະ ຫຍໍ້ທໍ້ຂອງຄົນໃນສັງຄົມ ກະວີນິພົນຂອງ ມາລີພວນ ແຝງດ້ວຍສະຕິເຕືອນໃຈສົນທຳປະຕິວັດ, ແນວຄິດຮັກຊາດ ຮັກລະບອບໃໝ່ອັນສົດໃສ ແລະ ຍັງຝັງໄວ້ດ້ວຍແປວໄຟອຳມະຕະໃນ ອຸດົມການປະຕິວັດ ແຕ່ສະໄໝຕໍ່ສູ້ກູ້ຊາດຈົນຈວບເທົ່າເຖິງປັດຈຸບັນ.*

*ໂຮມກະວີນິພົນເລື່ອງ : ມາລີພວນ ຊວນອ່ານ ມີຄວາມໂດດເດັ່ນທາງດ້ານວັນນະຄະດີ ໂດຍໃຊ້ຮູບແບບກະວີນິພົນຕາມຂະໜານ ວັນນະສິນ ດັ້ງເດີມຂອງຄົນລາວ ເພື່ອນຳສະເໜີພາບສັງຄົມ ດັ່ງທີ່ກ່າວມານັ້ນ ແລະ ແນວຄິດເລື່ອງພັນທະກິດ ຂອງກະວີທີ່ສຳຄັນ ຄືຜູ້ແຕ່ງສະແດງຄວາມຄິດເຫັນຕໍ່ສັງຄົມ ໄດ້ຫລາກຫລາຍສີສັນ ແລະ ອາລົມອ່ານບົດໜຶ່ງແລ້ວອົດໃຈບໍ່ໄດ້ທີ່ຈະອ່ານຕໍ່ໆໄປສົມກັບຊື່ເລື່ອງວ່າ : "ມາລີພວນ ຊວນອ່ານ".*

*ຜູ້ແຕ່ງໃຊ້ນາມແຝງຫລາຍນາມດັ່ງທີ່ປະກົດໃນບົດກະວີ ຕ່າງໆທີ່ບັນຈຸໃນເຫລັ້ມນີ້ ຫຼື ລົງໃນໜັງສືພິມອື່ນໆ ແຕ່ມາລີພວນ ເປັນນາມແຝງທີ່ຜູ້ກ່ຽວມັກຫລາຍກວ່ານາມອື່ນໆ... ມາລີພວນ ເປັນຊາວລາສີເມຖຸນ ເພາະເກີດວັນທີ 06 ມິຖຸນາ ປີ 1947 ຕາມລາສີແລ້ວຄົນເກີດໃນລາສີນີ້ມີພອນສະຫວັນ ໃນການຂີດຂຽນປາກເວົ້າເກັ່ງ ແລະ ເປັນສິລະປິນ ດັ່ງເຊັ່ນຫລາຍໆຄົນທີ່ຂ້າພະເຈົ້າຮູ້ຈັກກໍ່ລ້ວນແຕ່ມີພອນສະຫວັນສົມລາສີເກີດດັ່ງ ອ.ຈ ຄຳເພີຍ ວັນນະໂສພາ ກໍ່ເປັນນັກກະວີທີ່ ທ່ານຄົງໄດ້ອ່ານຜົນງານໂຮມກະວີນິພົນ ຂອງເພິ່ນມາແລ້ວ, ຂ້າພະເຈົ້າກໍ່ຮ່າວວ່າເກີດຫວິດກັນແຕ່ມື້ດຽວ ດັ່ງນັ້ນຈຶ່ງເປັນຄົນມັກອ່ານ, ມັກຂຽນ, ມັກຟັງ ແລະ ມັກສິນລະປິນອື່ນໆ ພວກເຮົາ ສາມສະຫາຍໂຊກດີທີ່ໄດ້ເກີດໃນດິນແດນ ອັນແສນຮັກ ຊຽງຂວາງວິລະຊົນ ອັນມີທົ່ງໄຫຫີນ ເປັນເອກະລັກ ສົມກັບຄຳກ່າວຂານຍ້ອງຍໍ ແລະ ຊື່ນຊົມຊາວຊຽງຂວາງ ຫຼື ສາວຊຽງຂວາງ ທັງງາມທັງເກັ່ງດັ່ງສຽງເພັງຂອງທ່ານ ໄຊຍະສິນ ສີໂຄດ ຈຸນນະມາລີ ອາດີດຮອງຫົວໜ້າກົມ*

ສິນລະປະກຳ ໄດ້ປະພັນເອົາໄວ້,ແລ້ວທ່ານຜູ້ອ່ານເດ ເກີດຕົງລາສີນີ້ບໍ່ ? ຫຼື ວ່າເກີດຢູ່ໃນລາສີໃດກໍ່ຕາມ ລອງຄົ້ນເຖິງຄວາມສາມາດ ແລະ ພອນສະຫວັນຂອງຕົນເອງເບິ່ງ... ຈະໄດ້ລິເລີ່ມເປັນນັກຂຽນແຕ່ເຍົາໄວ ເໝືອນ ມາລີພອນ ຄົນນີ້, ແລ້ວພວກເຮົາຈະໄດ້ພ້ອມກັນສ້າງໂລກ ແຫ່ງກະວີ ສີສັນໃຫ້ ທີ່ເຕັມໄປດ້ວຍໃບ ໄມ້ສີຂຽວ ... ຂຽວດັ່ງມໍລະກົດ ສົດໃສກວ່າບໍ່ຄ້າງ ສະຫວ່າງກວ່າແສງຕາເວັນ ແລະ ເຢືອກເຢັນກວ່ານໍ້າ ໝອກຊຸ້ນ ເມືອງ ຊຽງ ເອົ້າຊ່ວຍກັນອ່ານຊ່ວຍກັນຂຽນ... ເພື່ອຄວາມອຸດົມສົມບູນທາງດ້ານກະວີນິພົນ ແລະ ປຸ່ມລົ້ນໄປດັ່ງແສງທີ່ງທ້ອຍ ທີ່ສ່ອງແສງກະຈາຍຢາຍໄປທົ່ວປ່າດົງພົງໄພ ແລະ ເໝືອນແສງສະປອດໄລ ( Spot ligth ) ທີ່ສາດແສງ ຢູ່ຕົວເມືອງ ທີ່ຈະເລີນແລ້ວ.

ສຸດທ້າຍຂ້າພະເຈົ້າ ພ້ອມດ້ວຍເພື່ອນຮ່ວມງານ ໃນທີມສົ່ງເສີມການອ່ານແຫ່ງຊາດ ( ພິເສດ ອ.ຈ ຫລ້າຊ້ອຍ ແສງສຸວັນ ເຊິ່ງພວກຂ້າພະເຈົ້າຊັກຊວນໃຫ້ຄວັກຖົງຈົກເງິນອອກມາພິມ ) ສະແດງຄວາມພູມ ໃຈ ແລະ ຂໍສະແດງຄວາມຂອບອົກຂອບໃຈນຳບັນດາທ່ານທຸກໆທ່ານ ທີ່ໃຫ້ຄວາມສະໜັບສະໜູນອ່ານປື້ມ ກະວີນິພົນ " ມາລີພອນ ຊວນອ່ານ " ເຫລັ້ມນີ້ດ້ວຍຄວາມຕັ້ງໃຈ.

ວຽງຈັນ, ວັນທີ 07 ມິຖຸນາ 2007.

ກົງເດືອນ ເນດຕະວົງ

<u>ອ.ຈ ກົງເດືອນ ເນດຕະວົງ</u>

<u>ຜູ້ອຳນວຍການຫໍສະມຸດແຫ່ງຊາດ,</u>

<u>ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ</u>

# ຄຳເຫັນຂອງຜູ້ແຕ່ງ



ດ້ວຍຄວາມມຸ່ງຫວັງຕັ້ງໃຈຊຶ່ງມີແຕ່ເຫິງນານ ທີ່ຂ້າພະເຈົ້າຢາກໂຮມບົດກະວີຂອງຕົນ ແລະ ຂອງຜູ້ອື່ນທີ່ຕົນເອງໄດ້ສະສົມໄວ້ ເພື່ອໃຫ້ເປັນເຫລັ້ມອອກມາສູ່ສາຍຕາຂອງທ່ານຜູ້ອ່ານ ໂດຍຜ່ານການສື່ສານວຽກງານຂອງພັກ ຂອງລັດ ກໍ່ຄືວຽກງານໃນສັງຄົມນັບທັງດ້ານຮີດຄອງປະເພນີອັນດີງາມຂອງຊາດລາວພ້ອມທັງຮັກສາສິ່ງແວດລ້ອມ ໃຫ້ຍືນຍົງຄົງຕົວຕະຫຼອດໄປ ດ້ວຍການປະດິດຄິດແຕ່ງໃຫ້ເປັນກາບເປັນກອນ ເພາະວຽກງານປະດິດຄິດແຕ່ງນີ້ ຂ້າພະເຈົ້າໄດ້ມີ ພອນສະຫວັນມາແຕ່ເຍົາໄວ ( ມັກອ່ານ, ມັກຂຽນ, ມັກ ເວົ້າ ແລະ ມັກຟັງ ... ).

ເວລາຍັງນ້ອຍ ພໍ່ ແມ່ເຄີຍເລົ່າໃຫ້ຟັງວ່າ: "ພໍ່ເຖົ້າ ແມ່ເຖົ້າ ຊຶ່ງເປັນພໍ່ແມ່ ຂອງແມ່ມີຊື່ວ່າ : ທ້າວ ເພັດ ແລະ ນາງ ລຸນ, ເວົ້າຫຍັງອອກມາກໍ່ເປັນກາບ ເປັນກອນ, ມັກໃຊ້ແຕ່ພະຫຍາ ສິນທະນາ ເວົ້າຈາ ກັບໝູ່ເພື່ອນກໍ່ມັກໃຊ້ແຕ່ຄຳກະວີນິທານ ອັນເປັນທີ່ຊື່ນຊອບຂອງເພິ່ນທີ່ສຸດ ".

ຕໍ່ມາເຖິງເຊັ່ນ ພໍ່ ແມ່ ຂອງຂ້າພະເຈົ້າເພິ່ນກໍ່ສືບເນື່ອງຕາມຄວາມມັກດັ່ງກ່າວ, ຄອນໆກໍ່ເອົານິທານກ້ອມ ຫຼື ສຸພາສິດຕ່າງໆ ມາເລົ່າສູ່ລູກຫລານຟັງ ໂດຍອີງໃສ່ເນື້ອຫາສາລະ ນັ້ນມາເປັນຄະຕິເຕືອນໃຈໃຫ້ແກ່ລູກໆຫລານ ຢ່າງເປັນປະຈຳ ... ພິເສດເພິ່ນມັກຊອກຮູ້ ຊອກຢືມໜັງສືຜູກ ( ໃບລານ ) ມາອ່ານເລື້ອຍໆ ເປັນຕົ້ນແມ່ນເລື່ອງ : ການະເກດ, ສິນໄຊ, ຂຸນລູ ນາງອົ້ວ, ຈຳປາສີ່ຕົ້ນ ໆລໆ ... ຂ້າພະເຈົ້າກໍ່ນັ່ງເຝົ້າ ນັ່ງຟັງບາງຄັ້ງກໍ່ນອນຟັງໆ ຈົນຫຼັບ, ມື້ໃດເພິ່ນເມື່ອຍອ່ານ ເພິ່ນກໍ່ໄດ້ບອກໃຫ້ຂ້າພະເຈົ້າ ຫຼື ເອື້ອຍ ອ້າຍ ນ້ອງຂອງຂ້າພະເຈົ້າ ອ່ານໃຫ້ເພິ່ນຟັງ, ເພິ່ນບອກວ່າ: " ໜັງສືນີ້ບໍ່ມີໄມ້ເອກ, ບໍ່ມີໄມ້ໂທ ໃຫ້ຟ້ອງ ໃຫ້ບັດເອົາຕາມເນື້ອຫາສາລະ ແລະ ໃສ່ສຽງ ໃຫ້ອອນຊອນໄປພ້ອມຈຶ່ງເຂົ້າໃຈງ່າຍ ແລະ ຈຶ່ງເປັນຕາຟັງ ... ".

ດ້ວຍເຫດຜົນຂ້າງເທິງນີ້ ໄດ້ເປັນການກະຕຸກຊຸກຍູ້ໃຫ້ຂ້າພະເຈົ້າຍິ່ງມີຄວາມມຸ່ງໝັ້ນ ໃນການປະດິດຄິດແຕ່ງກາບກອນເປັນລຳດັບມາ, ດ້ານໜຶ່ງອີກໃນເວລາເປັນຄູ ກໍ່ໄດ້ສອນທາງດ້ານວັນນະຄະດີ ຕະຫຼອດມາ ຈົນເຖິງເດືອນ 03/1980 ສູນກາງສະຫະພັນແມ່ຍິງລາວ ກໍ່ໄດ້ສ້າງຕັ້ງໜັງສືພິມແມ່ຍິງລາວຂຶ້ນຊຶ່ງເປັນກະບອກ ສຽງຂອງສູນກາງສະຫະພັນແມ່ຍິງລາວ ເພື່ອສື່ສານ ແລະ ປົກປ້ອງສິດຜົນປະໂຫຍດອັນເປັນຈິງ ແລະ ຊອບທຳຂອງແມ່ຍິງ ແລະ ເດັກນ້ອຍລາວບັນດາເຜົ່າ, ຂ້າພະເຈົ້າຍິ່ງມີໂອກາດໄດ້ຂຽນບົດຂອງຕົນເອງລົງໃສ່ ໜ້າໜັງສືພິມເປັນລຳດັບມາ ໂດຍໃຊ້ນາມປາກກາຕ່າງໆເຊັ່ນ : ມາລີພອນ, ເພັດເມືອງພວນ ເພັດລຸນນະວົງ ດວງພຸດທາ, ຖິ່ນສະອອນ, ກິ່ງເພັດ ດາວເຮືອງ ... ຫວັງວ່າຄົງຈະໄດ້ຜ່ານສາຍຕາທ່ານຜູ້ອ່ານມາແລ້ວໃນໜ້າໜັງສືພິມຂອງ ກອງທັບປະຊາຊົນ, ປະຊາຊົນ, ວຽງຈັນໃໝ່ ພິເສດແມ່ນໜັງສືພິມແມ່ຍິງລາວ ...

ໃນໂອກາດທີ່ຂ້າພະເຈົ້າ ໄດ້ເປັນຮອງຫົວໜ້າກົມໂຄສະນາ ວັດທະນະທຳ ແລະ ໜັງສືພິມ 04 ປີກວ່ານັ້ນ ນອກຈາກຮັບຜິດຊອບລວມແລ້ວ, ຂ້າພະເຈົ້າກໍ່ໄດ້ລົງເລິກຮັບຜິດຊອບລາຍການ ວິທະຍຸ ພາກແມ່ຍິງລາວໂດຍເລືອກເຟັ້ນເອົາບົດກາບກອນ ຂອງຂ້າພະເຈົ້າເປັນຫົວບົດເປີດລາຍການ ວິທະຍຸ ຄັ້ງທຳອິດແຕ່

ໄລຍະນັ້ນເປັນຕົ້ນມາ...ໃນໂອກາດປະຫວັດສາດຕ່າງໆ ຂອງແມ່ຍິງຂັ້ນເທິງກໍ່ໄດ້ຈັດໃຫ້ມີການກວດສອບບົດກາບກອນ ເພື່ອຜູ້ເປັນແມ່ຂຶ້ນ, ຊ່ວງໄລຍະດັ່ງກ່າວ ຂ້າພະເຈົ້າກໍ່ໄດ້ຮີບໂຮມສະສົມ ແລະ ຮັກສາບົດກະວີ ທີ່ຊົງຄຸນຄ່າຂອງບັນດານັກກະວີອາວຸໂສ ແລະ ໜຸ່ມນ້ອຍໄດ້ຫລາຍພໍສົມຄວນ, ຄວາມມຸ່ງຫວັງຄັ້ງຕໍ່ໄປ ຍັງຄິດວ່າຈະໂຮມບົດກະວີ ດັ່ງກ່າວໃຫ້ເປັນເຫຼັ້ມ ເພື່ອໃຫ້ທ່ານຜູ້ອ່ານໄດ້ອ່ານ ໂດຍອາໄສທຶນຮອນ ແລະ ຈິດໃຈສະໜັບສະໜູນຈາກບັນດາທ່ານຜູ້ອ່ານນັບທັງບຸກຄົນ ແລະ ການຈັດຕັ້ງຕ່າງໆທີ່ມີນ້ຳໃຈຢາກຈະສົ່ງເສີມ ໂຮມ ກະວີສຳຫລັບຜູ້ເປັນແມ່ ( ຫຼື ຜູ້ມີພະຄຸນ ). ຂ້າພະເຈົ້າຍິນດີຮັບເອົາ ແລະ ຂໍສະແດງຄວາມຂອບໃຈໄວ້ໃນ ໂອກາດນີ້ເປັນຢ່າງສູງ.

ພ້ອມນີ້ ຂ້າພະເຈົ້າຂໍຄວາມຮ່ວມໄມ້ຮ່ວມມື ຈາກບັນດາທ່ານນັກປະດິດຄິດແຕ່ງກາບກອນ ທັງຫຼາຍ, ນອກຈາກຈະເອົາບົດຂອງທ່ານ ໜັງສືພິມຕ່າງໆແລ້ວ ທ່ານຫາກມີຄວາມປະສົງຢາກຈະເຂົ້າຮ່ວມປຶ້ມ ໂຮມກະວີ ກະລຸນາສົ່ງບົດຂອງທ່ານ ໄປຕາມຕູ້ໄປສະນີ " ຄຳອອນ ເພັດດາວເຮືອງ ຕູ້ປນ : 4186 ນະຄອນຫຼວງວຽງຈັນ ສ ປປ ລາວ" ຫຼື ຈະໂທລະສັບກະລຸນາໂທຣ : 020 555 7779 ຫຼື 030 5230 999 ຂ້າພະ ເຈົ້າຍິນດີຮັບເອົາບົດ ແລະ ຄຳຕິຊົມຂອງທ່ານ ເພື່ອພັດທະນາສີມືຂອງຕົນໃຫ້ດີຂຶ້ນເລື້ອຍໆ.

ຂ້າພະເຈົ້າຂໍຖືເອົາໂອກາດອັນເປັນປະຫວັດສາດ ແຫ່ງການສັງລວມບົດກະວີຕ່າງໆ ຂອງຕົນອອກມາສູ່ສາຍ ຕາຂອງທ່ານຜູ້ອ່ານໃນຄັ້ງນີ້, ສະແດງຄວາມຂອບໃຈຢ່າງສູງສົ່ງນຳທ່ານ ອາຈານ ກິງເດືອນ ເນດຕະວົງ ຜູ້ອຳນວຍການຫໍສະໝຸດແຫ່ງຊາດ, ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດ ພ້ອມດ້ວຍຄະນະ ແລະ ພະນັກງານທຸກຄົນ ທີ່ມີສ່ວນກ່ຽວຂ້ອງ ໄດ້ສະໜັບສະໜູນ ໃນການຈັດພິມປຶ້ມໃນຊຸດນີ້ ໃຫ້ປະກົດສູ່ສັງຄົມ ຢ່າງມີຄຸນຄ່າ. ຂ້າພະເຈົ້າຕີລາຄາສູງເຖິງແຮງໃຈແຮງຊັບ ທີ່ທ່ານໄດ້ສະຫຼະເພື່ອປະດັບສັງຄົມໃຫ້ມີຄວາມອຸ ດົມສົມບູນໄປດ້ວຍສະຕິປັນຍາໃນຫລາຍໆສີສັນ ທີ່ບໍ່ສາມາດພັນລະນານັບໄດ້, ຂໍໃຫ້ຄຸນງາມຄວາມດີທີ່ທ່ານໄດ້ປະກອບສ່ວນພັດທະນາສັງຄົມ ໃນໄລຍະຜ່ານມາກໍ່ຄືໄລຍະຕໍ່ໄປຈົ່ງດົນບັນດານໃຫ້ບັນດາທ່ານຈົ່ງປະ ສົບພົບພານແຕ່ສິ່ງທີ່ດີໆ ໃນຄວາມມຸ່ງຫວັງຕັ້ງໃຈທຸກປະການ.

ຄຸນຄວາມດີທີ່ເຄີຍສ້າງ ສັງຄົມຍິ່ງຈົດຈໍ່ ຂໍໃຫ້ບົດບາດເຈົ້າ ທະວີຂຶ້ນດັ່ງເລກຄູນ ນັ້ນທ້ອນ

ນະຄອນຫຼວງວຽງຈັນ, ວັນທີ 06/06/2007.

ມິດຕະພາບທີ່ສົດໃສ ຈິດໃຈທີ່ຜູກພັນ

ຈົ່ງສຸກສັນຊົ່ວນິລັນດອນ

ຄຳອອນ ເພັດດາວເຮືອງ

# ໂຮມປື້ມກະວີ

ມາລີພອນ ຊວນອ່ານ

ຊຽນ, ຮີບໂຮມ, ອອກແບບ, ຈັດໜ້າແລະຮູບພາບປະກອບ

ໂດຍ : ຄຳອອນ ເພັດດາວເຮືອງ

ກວດແກ້ແລະພິສູດອັກສອນໂດຍ: ກົງເດືອນ ເນດຕະວົງ ແລະ ຄຳອອນ ເພັດດາວເຮືອງ

ອົງການຈັດພິມ : ໂຄງການສົ່ງເສີມການອ່ານແຫ່ງຊາດ

ໂດຍ : ທ້າວຊ້ອຍ ແສງສຸວັນ

- ພິມຄັ້ງທີ່ນຶ່ງ ຈຳນວນ 2000 ຫົວ
- ຂະໜາດພິມ 15x21 ຊມ, ມີ 125 ໜ້າພິມ
- ພິມທີ່ ດວງມາການພິມ
- ເລກທະບຽນພິມ 001/ພຈ 02012008
- ຈຸດປະສົງພິມ ຈຳໜ່າຍທົ່ວໄປ

© ສະຫງວນລິຂະສິດ

# ລຳດັບບົດ

ໜ້າ

1. ພອນແດ່ທ່ານຜູ້ນຳ ... 1
2. ອວຍພອນກອງປະຊຸມໃຫຍ່ຄັ້ງທີ III ຂອງພັກ ປປ ລາວ ... 2
3. ເຊື່ອໝັ້ນຕໍ່ການນຳພາຂອງພັກ ... 4
4. ອາໄລຮັກເຖິງລຸງສຸພານຸວົງ ... 6
5. 2 ທັນວາມະຫາໄຊ ( ວັນສະຖາປະນາ ສ ປປ ລາວ) ... 7
6. ພຶດສະພາມະຫາໄຊ ( ວັນສາກົນຂອງຊາວຜູ້ອອກແຮງງານ ) ... 8
7. ມູນເຊື້ອສິງຫາໄຊ ( ວັນຍຶດອຳນາດ ) ... 9
8. ປີເກົ່າລາໄປ - ປີໃໝ່ມາແທນ ... 10
9. ໂຊກໃໝ່ໄຊງາມ ... 11
10. ປີໃໝ່ສົດໃສ ... 12
11. ພ້ອມກັນຮັກສາປະເພນີປີໃໝ່ລາວ ... 13
12. ພະທາດຫຼວງມິ່ງຂວັນປວງຊົນລາວ ... 14
13. ມຸ່ງຖືສຸພາບ ... 15
14. ສາວລາວແທ້ ... 16
15. ຮັກນວນສະຫງວນກາຍ ... 18
16. ສຽງສັ່ງຂອງແມ່ ... 29
17. ຄວາມງາມຕາມດ້ວຍຄວາມດີ ... 21
18. ຂໍຮຽນນຳອ້າຍ ... 23
19. ນ້ຳໃຈກຳລັງໄຟເພດຍິງ ... 25
20. ຊົມເຊີຍຜູ້ປ້ອງກັນຄວາມສະຫງົບ ... 27
21. ຮັກ ແລະ ຄິດເຖິງອ້າຍ ( ແດ່ວັນຄູ ) ... 28
22. ສາວຄູຄູ່ຮັກ ... 30
23. ສຸກໃຈໃນທ້ອງປາດ ... 31
24. ຂອບໃຈແພດໝໍ ... 34
25. ຮ່ວມອຸດົມການ ... 35
26. ຂໍຂອບໃຈ ... 37
27. ມິດຕະພາບອັນໃສແຈ້ງ ... 39
28. ມິດຕະພາບລາວ + ຫວຽດນາມ ... 40
29. ອວຍພອນວັນຊາດ ກຳປູເຈຍ ... 43
30. ສາຍສຳພັນ ... 45
31. ລາວ + ໄທໃກ້ນໍ່ ... 46
32. ສ້າງຄວາມດີ ໜີຄວາມຊົ່ວ ... 48
33. ດີຊົ່ວຢ່າມົວຫຼົງ ... 49

34. ຈົ່ງທວນຄືນບ້ານເກີດ ............ 50
35. ຊົມທຳມະຊາດ ............ 51
36. ຄິດເຖິງບ້ານເກີດ ............ 53
37. ໄປຍາມເມືອງຊຽງ ............ 55
38. ຜູ້ຍັງເຫຼືອ ............ 56
39. ແກ້ວບໍ່ຜັດສາມປີເປັນແຮ່ ............ 59
40. ບໍ່ລືມໄຊສົມບູນ ............ 61
41. ຄິດເຖິງໄຊສົມບູນ ............ 63
42. ທ່ອງທ່ຽວ 3 ມິຕິ ............ 65
43. ສາຍໃຈ ແລະ ແສງໄຟ ............ 66
44. ສູ້ຊົນຍາດເອົາຜົນຜະລິດ ............ 68
45. ຮ່ວມໃຈ ໃຊ້ເງິນກີບ ແລະ ຝາກເງິນປະຢັດ ............ 69
46. ພ້ອມກັນພັດທະນາຮອບດ້ານ ............ 70
47. ສ້າງຜົນງານຮັບຕ້ອນກອງປະຊຸມແມ່ຍິງລາວ ............ 71
48. ປະຫວັດຫຍໍ້ ວັນທີ 1/6 ( ວັນສາກົນສຳຫຼັບເດັກນ້ອຍ ) ............ 73
49. ບົດອວຍພອນຂອງເຍົາວະຊົນທັນວາ ............ 76
50. ນັກອາວະກາດຍິງ ............ 79
51. ຊົມເຊີຍໜັງສືພິມແມ່ຍິງລາວ ............ 81
52. ກອງປະຊຸມແມ່ຍິງໂລກທີ່ປັກກິ່ງ ............ 83
53. ຍິງທີ່ຄວນເວັ້ນ ............ 84
54. ຍິງລາວຄັ້ງກ່ອນ ............ 86
55. ນ້ຳຕາ ແລະ ຮອຍຍິ້ມ ............ 87
56. ຝັນກໍ່ບໍ່ໄດ້ ............ 90
57. ຢາກໄດ້ລູກຊາຍ ............ 91
58. ປະຫວັດຫຍໍ້ວັນທີ 8/3 ( ວັນສາກົນສຳຫຼັບແມ່ຍິງ ) ............ 93
59. 20/7 ຍືນຍິງໃນດວງໃຈ ( ສັນສ້າງຕັ້ງສະຫະພັນແມ່ຍິງລາວ ) ............ 97
60. ພໍ່ ແມ່ ............ 99
61. ລູກ ............ 101
62. ຮັກລູກ ............ 103
63. ຈາກໃຈຂອງແມ່ ............ 104
64. ສຸກສັນວັນເກີດ ............ 106
65. ພະທາດຫຼວງ ............ 109
66. ເພື່ອຄວາມສາມັກຄີ ............ 110
67. ເບິ່ງໂລກໃນແງ່ດີ ............ 111
68. ແມ່ບ້ານປະຫານເຮືອນ ............ 113
69. ອົດທົນ ............ 114


24 / VII

70. ຄຽງຄູ່ຢູ່ສະເໝີ ........................................ 117
71. ຄອບຄົວສຸກສັນ ........................................ 119
72. ຄົນອານາໄມຫົວໃຈພັດທະນາ ........................................ 121
73. ເຊັ້ງອະນາໄມ ແລະ ຊ່ວງເຮືອ ........................................ 123
74. ເຊັ້ງຕ້ານຢາບ້າ ແລະ ສິ່ງມຶນເມົາ ແລະ ເຊັ້ງຊົມເຊີຍໂຄງການ ........................................ 124
75. ສວ່າງເບຍເສຍດາຍເງິນ ........................................ 125
76. ເມົາ ........................................ 126
77. ເບື່ອ ........................................ 127
78. ໂອ ! ຜູ້ຊາຍ ........................................ 128
79. ເມກຊີວິດ ........................................ 129
80. ຜົວ ເອີຍ ຜົວ ! ........................................ 130
81. ນ້ຳນິ້ງໄຫລເລິກ ........................................ 132
82. ເຕັມໃຈຮັກ ........................................ 133
83. ແປວຮັກປັກໃຈ ........................................ 134
84. ຫົວໃຈແປ້ວ ........................................ 135
85. ຄວາມມັກຕ່າງກັນ ........................................ 136
86. ຄວາມຮັກ ........................................ 137
87. ຄິດເຖິງຄວາມຫຼັງ ........................................ 138
88. ຕອນນັ້ນ ........................................ 139
89. ສຽງຈິ່ມຈາກໃຈ ........................................ 140
90. ຍັງຮັກ ແລະ ຄິດເຖິງ ........................................ 141
91. ສາບານ ........................................ 142
92. ຕາຍກໍ່ບໍ່ລືມ ........................................ 143
93. ຮັກສາມຊື່ນ ........................................ 145
94. ງຽບງຽບ ........................................ 146
95. ລຳລຶກອະດີດ ........................................ 147
96. ຄຸນຄ່າຂອງຄວາຍ ........................................ 150
97. ແຜ່ນດິນໄຫວຫົວໃຈໄກວ ........................................ 151
98. ສ້າງສັນປັນໃຈ ........................................ 152
99. ບາບກຳມີຈິງ ........................................ 153
100. ຊ່ວຍແຮງຊ່ວຍໃຈ ........................................ 154
101. ຊີວະປະຫວັດຫຍໍ້ຂອງຜູ້ຂຽນ ........................................ 155


ກອງປະຊຸມໃຫຍ່ II

# ພອນແດ່ທ່ານຜູ້ນຳ

★ ວາລະປີໃໝ່ນີ້ ຍິງລາວທົ່ວສາທາ
ຂໍສົ່ງພອນມາຍັງ ທ່ານຜູ້ນຳພຽງພ້ອມ
ຖືເອົາພອນໄຊກ້າ ແຖມລາສີເນື່ອປີໃໝ່
ນີ້ສັງຂານລ່ວງລ້ຳ ຖວາຍພອນແກ້ວແດ່ຜູ້ນຳ ນີ້ແລ້ວ

★ ບຸນຄຸນພັກສູງສົ່ງລ້ຳ ບໍ່ມີສິ່ງປຸນປານ
ພັກໄດ້ນຳປວງຊົນ ຜ່ານມໍລະສຸມຮ້າຍ
ພັກໄດ້ນຳພາຫວ້າຍ ນະທີຫລວງແກ້ງຕາດ
ພັກສາມາດຜ່ານພົ້ນ ຜະຈົນສູ້ໝູ່ມານ ແທ້ນາ

★ ສຸດຊົ່ວຊີວິດນີ້ ພ້ອມຮຸ່ນຄົນທັລງ
ຈະສຶກສາກັນຕາມ ທ່ານຜູ້ນຳສອນໄວ້
ສາມັກຄີກັນໃຫ້ ຈິດໃຈເອກະພາບ
ທຸກເຜົ່າພົງພີ່ນ້ອງ ທີ່ມີເຊື້ອຊາດລາວ ນີ້ແລ້ວ

★ ນອກຈາກນີ້ ຍັງສາມັກຄີເພື່ອນສາກົນ
ເພື່ອຮັກສາຜົນຂອງການປະຕິວັດ ປົດປ່ອຍເອົາຊົນຊັ້ນ
ອອກຈາກການເຂັ່ນຂ້າ ຮາວີທີກົດຂີ່
ອອກຈາກການບີບບີ້ ຕີຂ້າຂົ່ມກັນ ນັ້ນແລ້ວ

★ ແມ່ຍິງລາວທົ່ວແດ້ວນ ແດນແຫ່ງຈຳປາ
ຈະຝຶກຝົນຕົນເອງ ໃຫ້ຊື່ງາມນາມກ້ອງ
ຈະໃຫ້ລືມຄຳຍ້ອງ ວ່າຍິງ-ຊາຍສະເໝີພາບ
ພ້ອມກັນສ້າງຊາດລາວໃຫ້ກ້າວ ເດີນໜ້າຕະຫຼອດໄປ ແທ້ແລ້ວ



# ອວຍພອນ ກອງປະຊຸມໃຫຍ່
# ຄັ້ງທີ່ III ຂອງພັກ ປປລາວ

| | | | |
|---|---|---|---|
| ແມ່ຍິງລາວ | ຂໍຂ່ຳນັບຮັບຕ້ອນ | ກອງປະຊຸມໃຫຍ່ຄັ້ງທີ III | |
| | ຂອງພັກ ປປ ລາວ | ທີ່ເປີກເປີຍບານແຍ້ມ | |
| | ລະດູການປີນີ້ | ຈຳປາໄດ້ມີກຽດ | |
| | ຍາດກັນມາອາດເອ້ | ກອງປະຊຸມໄດ້ຮ່ວມຫອມ | ແທ້ແລ້ວ |
| ແມ່ຍິງລາວ | ພວກເຮົາໄດ້ຫຼຸດພົ້ນ | ແອກຈັກກະພັດສັກດີນາ | |
| | ມີສິດສຽງວາຈາ | ປາກດັ່ງລົມໄດ້ | |
| | ຄວາມທຸກທົນໝອງໄໝ້ | ໃນໃຈໄດ້ເຫີນຫ່າງ | |
| | ຍ້ອນມີພັກຜູ້ເອກອ້າງ | ບຳລຸງສ້າງໝູ່ຍິງ | ນີ້ແລ້ວ |
| ແມ່ຍິງລາວ | ຂໍເທີດທູນພັກໄວ້ | ສະເໝີພາບພຽງທົວ | |
| | ເພື່ອສືບຕໍ່ບຸກລະດົມ | ທົ່ວສັງຄົມໃຫ້ເຫັນແຈ້ງ | |
| | ບົດບາດຍິງເສີມສ້າງ | ຕາມທາງພັກວາງອອກ | |
| | ຍົກສູງບົດບາດຍິງທ່ຽງແທ້ | ສະເໝີດ້ານດັ່ງຊາຍ | ແທ້ແລ້ວ |
| ແມ່ຍິງລາວ | ເນົາຢູ່ໃນດ່ານດ້າວ | ລະບອບໃໝ່ສາທາ........ | |
| | ໃຕ້ການນຳພາຂອງພັກ | ສະງ່າງາມນາມກ້ອງ | |
| | ຂໍປະຕິຍານຕົນຕັ້ງ | ສຳພັນກັນໃຫ້ແໜ້ນແກ່ນ | |
| | ຕັ້ງໜ້າເຮັດວຽກງານຮອບດ້ານ | ໃຫ້ມັນໄດ້ຄາດໝາຍ | ແທ້ແລ້ວ |
| ແມ່ຍິງລາວ | ຂໍຍໍຍົກພົ້ວດອກໄມ້ | ກ້ານກິ່ງຈຳປາ | |
| | ຖວາຍບູຊາແດ່ກອງປະຊຸມ | ໃຫ້ເບີກບານຫອມກຸ້ມ | |
| | ຖວາຍເປັນພອນໄຊໃຫ້ | ຕົວແທນທຸກເພດເຜົ່າ | |
| | ບັນລຸຜົນໃຫຍ່ກວ້າງ | ສົມດ້ານດັ່ງປະສົງ | ນັ້ນທ້ອນ |

# ເຊື່ອໝັ້ນຕໍ່ການນຳພາຂອງພັກ

| | | | |
|---|---|---|---|
| ★ | ຫ້າສິບກວ່າປີຜ່ານພົ້ນ | ຜົນແດດໄພມະຫັນ | |
| | ຖ້າຈະປັນເປັນສອງ | ປ່ອງທາງເດີນກ້າວ | |
| | ພັກໄດ້ພາລາວຂ້າມ | ສະໜາມໄພທັງສອງຍ່ານ | |
| | ສາມສິບປີຜ່ານພົ້ນ | ປະຈົນສູ້ໝູ່ມານ | ແທ້ແລ້ວ |
| ★ | ກົນອຸບາຍຮອບດ້ານ | ມານໃຫຍ່ທັງສອງ | |
| | ເຂົາຫວັງປອງກືນລາວ | ໃຫ້ອ່ອນແອຍອມກົ້ມ | |
| | ເຂົາລະດົມລາວຂ້າ | ຄົນລາວບັ້ນແຍ່ງ | |
| | ແຍ່ງເອົາຄົນກຸ່ມນັ້ນ | ແຍ່ງເອົາກຸ່ມນີ້ ໃຫ້ຕີຂ້າຂົ່ມກັນ | ແທ້ນາ |
| ★ | ໃຊ້ກົນລວງບໍ່ໄດ້ | ຍ້ອນພັກມີປະສົບການ | |
| | ປະຕິການຈຶ່ງປີນຂັ້ນໄດ | ກໍ່ສົງຄາມເພມ້າງ | |
| | ເອົາທະຫານບຸກເຂົ້າ | ເອົາຍົນມາຖະຫຼົ່ມ | |
| | ເຮັດສົງຄາມປາບກັງງ | ທຳລາຍລ້າງທຸກປະການ | ແທ້ແລ້ວ |
| ★ | ພັກປະຊາຊົນລາວບໍ່ໄດ້ຢ້ານ | ມີແຕ່ຍິ່ງປັບປຸງ | |
| | ທັງລະດົມແນວຄິດ | ແລະ ສ້າງແຜນຕີຕ້ານ | |
| | ການທະຫານພ້ອມ | ການເມືອງຄວບຄູ່ | |
| | ປະຊາຊົນຍິ່ງຮັບຮູ້ | ແລະ ເຄືອງແຄ້ນຍັກມານ | ແທ້ນາ |
| ★ | ເຂດປົດປ່ອຍນັບມື້ກວ້າງ | ປວງຊົນຍິ່ງທະວີຄູນ | |
| | ຍິ່ງສະໜັບສະໜູນພັກ | ແລະ ຮ່ວມກາຍໃຈສູ້ | |
| | ຫຼາຍລະດູການຕ້ານ | ໂຈນມາບໍ່ຢຸດຢ່ອນ | |
| | ພັກຈຶ່ງໃຊ້ສາມໄມ້ຄ້ອນ | ສຸມເຂົ້າໃສ່ກະບານ | ແທ້ແລວ |
| ★ | ກະແສຟອງຟົດພົ້ນ | ໃນສາມຊາດອິນດູຈີນ | |
| | ພວກສັດຕູເສຍຂ້ວນ | ຈຶ່ງຮີບເຊັນຍອມແພ້ | |
| | ເພາະວ່າເຮືອນຮັງຄ້າຍ | ສູນບັນຊາການຖືກມ້າງມຸ່ນ | |
| | ສຸນລະມຸນແຕກມ້າງ | ຄາງໂອ້ຈຶ່ງຄ່ອຍເຊັນ | ດອກນາ |
| ★ | ພັກຈັບໂອກາດຍາດໄດ້ | ໂຊກໃຫຍ່ມະຫາໄຊ | |
| | ພັກຈຶ່ງສະຖາປະນາ | ສ ປ ປ ລາວ ຂຶ້ນ | |
| | ວັນທີ 2 ທັນວາ ປີ 75 | ເປັນວັນປະກາດປ່າວ | |
| | ວ່າຊາດລາວເອກອ້າງ | ລາວເປັນເຈົ້າຊາດລາວ | ແລ້ວເນີ |
| ★ | ໃນສະໄໝປົກປ້ອງ | ປະເທດຊາດໃຫ້ມີສຸກ | |
| | ພັກນຳພາປະຊາຊົນບຸກ | ພັດທະນາພຽງພ້ອມ | |
| | ການທະຫານນັ້ນ | ສຳຄັນຍິ່ງກວ່າເກົ່າ | |
| | ຖ້າສັດຕູບຸກບ່ອນເຂົ້າ | ກໍ່ເຕືອນຕ້ານຕອບທັນ | ແທ້ແລ້ວ |

★ ການສ້າງສາເບື້ອງຕົ້ນ — ອຸປະສັກຄູ່ຄຽງເງົາ
ກົນອຸບາຍຂອງເຂົາ — ບໍ່ປ່ອຍເຮົາພັດທະນາໄດ້
ມັນໄດ້ວາງແຜນໃຊ້ — ກົນລວງຮ້ອຍແປດ
ເຮັດຜີສູນຢູ່ບ່ອນັ້ນຢູ່ບ່ອນນີ້ — ບໍ່ຍອມໃຫ້ພັດທະນາ ຊັ້ນນາ

★ ພໍເມື່ອສັງເກດໄດ້ — ຫລາຍເທື່ອມັນຂັດຂວາງ
ປວງປະຊາເລີຍຈັບ — ຈອບອອຍເອົາເລື້ອງ
ບາງຄັ້ງມັນທຳທ່າຂືນຂັດຂໍ້ — ກໍ່ກຳຄໍບາບຊູ່
ເລີຍເລົ່າອອກປາກຕ້ານ — ເຂົາວານຂ້ອຍບອກສູນ ແທ້ແລວ

★ ໃຕ້ການນຳພາພັກຊີ້ — ເບືອງສ່ອງໃສສີ
ພັກໄດ້ມີນະໂຍບາຍ — ແນບນຽນໝູນໃຊ້
ຍຸກສະໄໝເປີດກວ້າງ — ພົວພັນນາໆຊາດ
ບົດບາດ ສ ປປ ລາວ — ນັບມື້ກ້າວ ປວງຊົນລາວນັບມື້ເດັ່ນ
ຊາວໂລກເຫັນຮັບຮູ້ — ຂະຫຍາຍກວ້າງຢ່າງວ່ອງໄວ ແທ້ນາ

★ ສິ່ງສຳຄັນແມ່ນພັກໄດ້ — ໂຮມທໍ່ສາມັກຄີ
ທຸກເຜົ່າຊົນຊາວລາວ — ທົ່ວທັງເໜືອໃຕ້
ຜູ້ຢູ່ໄກຢູ່ໃກ້ — ແດນໃດປະເທດຕ່າງ
ພັກບໍ່ວາງທ່າງເຍັ້ນ — ພັກຍັງເອີ້ນອວ່າຍຄືນ ມາເນີ



# ອາໄລຮັກເຖິງລຸງສຸພານຸວົງ

| | | | |
|---|---|---|---|
| ★ | ໃນໂອກາດນີ້ຄ້າຍ | ວັນກຳເນີດຂອງລຸງ | |
| | ໄດ້ໝູນວຽນມາເຖິງ | ຄິດຮ່ຳເພິງຫວນຮູ້ | |
| | ລຸງໄດ້ປູທາງໄວ້ | ປະຫວັດການທີ່ໃສສ່ອງ | |
| | ໃຫ້ເຜົ່າພີ່ງພີ່ນ້ອງ | ລາວເຮົາໄດ້ໄຕ່ຕາມ | ແທ້ແລ້ວ |
| ★ | ຄັ້ງທຳອິດທີ່ຫລານໄດ້ພົບພໍ້ | ລຸງຢູ່ສູນກາງ | ຄາວນັ້ນ |
| | ຊຸດອົບຮົມສະມາຄົມແມ່ຍິງ | ຢູ່ຖ້ຳແນວ ແຂວງ ຫົວພັນພຸ້ນ | |
| | ລຸງມີອັດທະຍາໃສກວ້າງ | ຄອງໃຈຜູ້ໄດ້ຈອບ | |
| | ຫລານນີ້ແສນຊາບຊຶ້ງ | ຫົວໃຈເຕັ້ນຕື່ນເຕັ້ນ | ແທ້ແລ້ວ |
| ★ | ຍາມເມື່ອລຸງກ່າວຊີ້ | ລຸງບົ່ງບອກແຕ່ຄວາມດີ | |
| | ລູກຫລານພາກັນຟັງ | ໃສ່ໃຈບໍ່ລືມໄດ້ | |
| | ລຸງໄດ້ນຳພາໃຫ້ | ມີຈິດໃຈອັນຜຸດຜ່ອງ | |
| | ສາມັກຄີເຜົ່າພີ່ງພີ່ນ້ອງ | ລາວນີ້ໃຫ້ທົ່ວເຖິງ | ແທ້ເນີ |
| ★ | ລຸງໄດ້ສອນສັ່ງຊີ້ | ຈຸດໝາຍໃຫຍ່ອຸດົມການ | |
| | ເປົ້າໝາຍອັນຍາວນານ | ເພື່ອຊາດລາວເດີນກ້າວ | |
| | ອຸປະສັກຂວາງໜ້າ | ຈົ່ງພາກັນບຸກຜ່ານ | |
| | ເພື່ອລູກຫລານຮຸ່ນນ້ອຍ | ລາວເຮົາໄດ້ຢູ່ເຢັນ | ນັ້ນເນີ |
| ★ | ປະຫວັດລຸງເລົ່ານັ້ນ | ສະອື້ນຕື້ນຕຳໃຈ | |
| | ນ້ຳຕາໄຫລເປັນຄອງ | ແລະ ອັ່ງຫວງທັງແຄ້ນ | |
| | ມັນໄດ້ແຖມພະລັງໃຫ້ | ແປວໄຟຍິ່ງອົງອາດ | |
| | ປະເທດຊາດເຮົາເດືອດຮ້ອນ | ຫລານຈະສູ້ຮ່ວມປະຊາ | ນີ້ແລ້ວ |
| ★ | ລຸງເອີຍ ! ເຖິງວ່າລຸງຈາກແລ້ວ | ລາຈາກໄປໄກ | |
| | ລຸງຈາກໄປນານແສນນານ | ບໍ່ຕ່າວຄືນມາແລ້ວ | |
| | ມັນແມ່ນກົງກຳແກ້ວ | ກົດເກນບໍ່ລຽງຫລີກ | ເປັນແລ້ວ ! |
| | ສ່ວນຄຸນນະທຳຄຳສັ່ງສອນຂອງລຸງ | ຫາກຍັງມີຄ່າລົ້ນນຳຢູ່ຢູ່ຄູ່ໃຈ | ແທ້ນາ |
| ★ | ປະຈຸບັນ ແລະ ອານາຄົດຂ້າງໜ້າ | ນາມຊື່ລຸງສຸພານຸວົງ | |
| | ໄດ້ກາຍເປັນກົງທັນ | ຊຸກດັນຂະຫຍາຍກວ້າງ | |
| | ພາລະກຳທີ່ລຸງສ້າງ | ປວງຊົນຈະສືບຕໍ່ | |
| | ລູກຫລານຂໍສືບສ້າງ | ໃຫ້ລາວກ້າວຮຸ່ງຈະເລີນ | ແທ້ແລ້ວ |
| ★ | ຊື່ສຽງລຸງ ແລະ ປະເທດຊາດນີ້ | ບໍ່ຕັດແຍກອອກຈາກກັນ | ເປັນແລ້ວ |
| | ປະຊາຊົນລາວທັງຜອງ | ແມ່ນບໍ່ລືມລຸງໄດ້ | |
| | ຊື່ສຽງລຸງຍັງດັງກ້ອງ | ກັງວານຊາວໂລກຊ່າ | |
| | ຊື່ສຽງລຸງຜູກໝັ້ນ | ປະດັບເອ້ຊາດລາວ | ນີ້ແລ້ວ |

# 2 ທັນວາ ມະຫາໄຊ

★ 2 ທັນວາຂີດໄວ້ ປະຫວັດສາດຈາລຶກ
ວ່າຊາດລາວຂອງເຮົາ ເອກະລາດມາມີແລ້ວ
ສິດປະຊາທິປະໄຕ ມີພ້ອມ ປວງຊົນແສນຊົດຊື່ນ
ຊາວໂລກໄດ້ຮັບຮູ້ ວ່າລາວໄດ້ຮັບໄຊ ແລ້ວນາ

★ 2 ທັນວາ ແຕ່ລະຄັ້ງ ທີ່ໝູນຮອບວຽນມາ
ປວງປະຊາສະຫຼອງໄຊ ແຕ່ລະປີບໍ່ມີເວັ້ນ
ໄດ້ທວນຄືນມູນເຊື້ອ ຜົນງານທີ່ສ້າງຜ່ານ ມານັ້ນ
ເພື່ອໃຫ້ເປັນບາດກ້າວ ບຸກໜ້າຕໍ່ໄປ

★ 2 ທັນວາ ຈາລຶກໄວ້ ຜົນງານໃຫຍ່ຂອງປວງຊົນ
ທີ່ສະຫລະຊີວາ ເຫື່ອແຮງພຽງພ້ອມ
ເພື່ອໃຫ້ນຳມາໄດ້ ໄຊງານທະວີເພີ່ມ
ເປັນຂອງຂັວນຮັບຕ້ອນ ທັນວາ ຄັ້ງຕໍ່ໆໄປ ແທ້ແລ້ວ

★ 2 ທັນວາ ຄັ້ງໃໝ່ນັ້ນ ຜົນງານໃໝ່ທະວີຄູນ
ມະຕິຂອງສູນກາງ ທີ່ໄດ້ວາງລົງນັ້ນ
ຈະໄດ້ຜັນຂະຫຍາຍໃຫ້ ເປັນຈິງໝົດທຸກສິ່ງ
ໃຫ້ຍິ່ງໃຫຍ່ ແລະ ຮອບດ້ານ ໜັກແໜ້ນກວ່າເດີມ ແທ້ແລ້ວ

★ 2 ທັນວາ ຂໍຮຽກຮ້ອງ ໃຫ້ສືບຕໍ່ສາມັກຄີ
ເຊື້ອເຜົ່າພິ່ງແພງລາວ ທີ່ຢູ່ໄກ ຫຼື ໃກ້
ຂໍໃຫ້ຫັນໃບໜ້າ ທັງຈິດໃຈຄະນຶງອ່າວ ແດ່ເນີ
ຜືນແຜ່ນດິນລາວແຫ່ງນີ້ ຈົ່ງຮູ້ສ້າງຊ່ວຍກັນ ນັ້ນທ້ອນ

★ 2 ທັນວາ ຈົ່ງໄດ້ຍືນຍົງໝັ້ນ ປະດັບແຜ່ນແດນຈຳປາ
ຂໍໃຫ້ມີລາສີ ດັ່ງພະຈັນຖຽງຟ້າ
ຂໍໃຫ້ແວວວາວເຫລື້ອມ ເໝືອນດາວນະພະຮຸ່ງ
ຂໍໃຫ້ພູມແຜ່ນພື້ນ ລາວນີ້ຢູ່ກະເສີມ ນັ້ນທ້ອນ

# ພຶດສະພາມະຫາໄຊ

| | | |
|---|---|---|
| ★ | ໃນໂອກາດເລີດລ້ຳ | ວັນປະຫວັດສາດແຮງງານ |
| | ວັນທີ 1 ພຶດສະພາ | ຮອບວຽນມານີ້ |
| | ປະຫວັດມີມາແລ້ວ | ຄົນງານທີ່ອົງອາດ |
| | ສາມັກຄີຮ່ວມເຂົ້າ | ໃຫ້ເປັນກ້ອນຕ່ອນກຳລັງ |
| ★ | ກຳມະກອນເຫຼົ່ານັ້ນ | ພາກັນນັດຢຸດງານ |
| | ເພື່ອຮຽກທວງເງິນເດືອນ | ໃຫ້ສົມເຫື່ອແຮງທີ່ເຂົາສ້າງ |
| | ເຂົາໄດ້ພາກັນມ້າງ | ແອກປົກຄອງແບບກົດຂີ່ |
| | ພວກນາຍທຶນຈຶ່ງຮັບຮູ້ | ແລະ ຍອມໃຫ້ຄ່າຕອບແທນ |
| ★ | ຍ້ອນວ່າຜົນສະທ້ອນ | ຍູ້ສິ່ງກະແສຟອງ |
| | ຂອງຂະບວນຄອມມູນປາຣີ | ໄຂຊ່ອງທາງຫຽວດັ້ນ |
| | ໃຫ້ຈິດໃຈຂອງຄົນຈ້າງ | ຊັງນາຍຜູ້ກົດຂີ່ |
| | ຈຶ່ງໄດ້ໂຮມຮ່ວມທ້ວງ | ທວງໃຫ້ຜ່ອນງານ ... |
| ★ | ນັບແຕ່ນີ້ເລີ່ມຕົ້ນ | ແຕ່ປີ ໜຶ່ງແປດແປດຫົກ ( 1886 ) |
| | ຂະບວນກຳມະກອນ | ໄດ້ແຜ່ລາມໄກກ້ວາງ |
| | ປວງປະຊາຊາວເຊື້ອ | ຄົນງານໃນທົ່ວໂລກ |
| | ຈຶ່ງໄດ້ໂຮມຮ່ວມເຂົ້າ | ຂະບວນນີ້ ເພີ່ມທະວີ |
| ★ | ກຳມະກອນລາວພີ່ນ້ອງ | ກໍ່ເປັນກຽດອັນສູງ |
| | ທີ່ໄດ້ເປັນສະມາຊິກ | ຂອງອົງການກຳມະບານສາກົນດ້ວຍ |
| | ຜູ້ຊຽນຂໍອວຍພອນໃຫ້ | ກຳມະກອນລາວຢູ່ທຸກແຫ່ງ |
| | ຈົ່ງໄດ້ເສີມສິ່ງຍູ້ | ມູນເຊື້ອສະຫງ່າງາມ ນີ້ທ້ອນ |

# ມູນເຊື້ອສິງຫາໄຊ

★ ຄິດເຖິງການຕໍ່ສູ້　　ທີ່ດຸເດືອດ ແລະ ສັບສົນ
ໃຊ້ເວລາດົນນານ　　ທີ່ເຄື່ອນໄຫວຕໍ່ຕ້ານ
ດັບສູນມານມວນບ້ານ　　ທີ່ຫວັງມາກົດຂີ່
ທັງສະໝູນຮັບຈ້າງ　　ທີ່ຂາຍເຊື້ອຊາດລາວ

★ ການຕໍ່ສູ້ຍືດເຍື້ອ　　ສາມສິບກວ່າປີມາ
ເລືອດ ແລະ ນ້ຳຕາລາວໄຫລ　　ບໍ່ນັບພັນລະນາໄດ້
ຍ້ອນຈິດໃຈໝາຍມຸ້ງ　　ໃຫ້ລາວເຮົາໄດ້ເອກະລາດ
ເພື່ອໃຫ້ລຸລາບໄດ້　　ປະຊາທິປະໄຕພ້ອມພ່ຳກັນ

★ ຍ້ອນການນຳພາຍຶດໝັ້ນ　　ກ້າແກ່ນອຸດົມການ
ເຖິງຈະເປັນເວລາ　　ຍ່ານຍາວດາວເວີ້ງ
ອຸປະສັກຂວາງຂັ້ນ　　ຜາຊັນຮ້ອຍຍ່ານ
ກໍ່ບໍ່ຢຸດຢ່ອນຢ້ານ　　ຫານກ້າຜ່ານໄປ

★ ພັກມີນະໂຍບາຍຖືກຕ້ອງ　　ເປັນປ່ອງແປວໄຫລ
ປວງປະຊາໄປຕາມ　　ຊອບເຊີຍຊົມຍ້ອງ
ຍ້ອນວ່າແນວທາງນັ້ນ　　ເປັນທຳ ແລະ ສອດຄ່ອງ
ກັບຈິດໃຈຂອງເຜົ່າພົງພີ່ນ້ອງ　　ທີ່ເປັນເຈົ້າຊາດຕົນ

★ ນັບແຕ່ການຕໍ່ສູ້　　ໄດ້ລິເລີ່ມກາຍມາ
ປວງປະຊາຊົນລາວ　　ໄດ້ຮ່ວມໃຈກຽມພ້ອມ
ຍົກສູງທຸງຜືນກວ້າງ　　ກາວົງເດືອນເປື້ອງປິ່ນ
ບຸກລະດົມກັນກ້າວຂຶ້ນ　　ກຽມພ້ອມປາບມານ

★ ບັນຍາກາດຄຶກຄື້ນ　　23 ສິງຫາໄຊ ( 1975 )
ທີ່ເດີນພະຫາດຫລວງວຽງຈັນ　　ປະກາດຕົນເປັນເຈົ້າ
ຍຶດອຳນາດມາມີໄດ້　　ຕົວແທນທົ່ວປະເທດ
ເປັນເຫດການເອກອ້າງ　　ໂລການັ້ນຊ່າລື　　ແທ້ແລ້ວ

★ ມູນເຊື້ອການຕໍ່ສູ້　　ຍຶດອຳນາດມານີ
ມູນເຊື້ອສິງຫາໄຊ　　ຈົ່ງເຊີດຊູຮັກສາໄວ້
ມູນເຊື້ອມະຫາໄຊນັ້ນ　　ນິລັນດອນຕ້ອງຈົດຈື່
ມູນເຊື້ອອົງອາດກ້າ　　ຮັກສາໄວ້ຕະຫລອດການ　　ນັ້ນທ້ອນ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ